**COVID-19 advice for families**

**School operations in *Greater Sydney**

# ຄຳແນະນຳ ສຳລັບ ຄອບຄົວ ກ່ຽວກັບ COVID-19

## ການດຳເນີນງານຂອງໂຮງຮຽນໃນເຂດ *Greater Sydney

ກະຊວງ ສຶກສາ ຣັດ NSW ແລະ ກົມ ອະນາໄມ NSW ກຳລັງເຮັດວຽກຮ່ວມກັນເພື່ອ ຕອບໂຕ້ຕໍ່ COVID-19.

ອີງຕາມຄຳແນະນຳ ຈາກ ກົມ ອະນາໄມ NSW ການຮຽນຈາກເຮືອນໄດ້ຖືກນຳໃຊ້ແລ້ວ ສຳລັບບັນດາໂຮງຮຽນໃນເຂດ *Greater Sydney (ປະກອບມີ Blue Mountains, Central Coast, Wollongong and Shellharbour). ບັນດາໂຮງຮຽນຕ່າງໆແມ່ນເປີດສຳລັບນັກຮຽນທຸກຄົນທີ່ຕ້ອງການ. ຖ້ານັກຮຽນ ຫຼື ພໍ່ແມ່ ຫຼື ເດັກມີອາການ ຂອງCOVID-19 ເຖິງວ່າຈະເບົາບາງທີ່ສຸດ (COVID-19 symptoms) ພວກເຂົາຕ້ອງບໍ່ເຂົ້າໂຮງຮຽນແລະຕ້ອງບໍ່ກັບຄືນໂຮງຮຽນຈົນກວ່າພວກເຂົາຈະໄດ້ຮັບຜົນການກວດໃນທາງລົບແລະປອດຈາກອາການ.

### ໜ້າກາກ ແລະ ການປົກປິດໜ້າ

ໃນຂະນະທີ່ຢູ່ໂຮງຮຽນ ໜ້າກາກຫຼືການປົກປິດໜ້າຕ້ອງໄດ້ໃສ່ເມື່ອຢູ່ຂ້າງໃນໝົດທຸກບ່ອນ ສຳລັບ:

- ບັນດານັກຮຽນທຸກໆຄົນທີ່ຢູ່ Year 7 ແລະຊັ້ນສູງຂຶ້ນໄປ
- ພະນັກງານທຸກຄົນ.

ຂໍ້ຍົກເວັ້ນບາງຢ່າງໃຊ້ກັບກົດລະບຽບເຫຼົ່ານີ້. ກະລຸນາອ້າງອີງໃສ່ກົດລະບຽບການໃສ່ໜ້າກາກຢູ່ໃນເວັບໄຊທ໌ຂອງລັດຖະບານ NSW (Face mask rules on the NSW Government website) ເພື່ອເອົາຂໍ້ມູນເພີ້ມເຕີມ.

### ຜູ້ມາຢ້ຽມຢາມ

ຜູ້ມາຢ້ຽມຢາມທີ່ບໍ່ຈຳເປັນບໍ່ຖືກອະນຸຍາດໃນສະຖານທີ່ໂຮງຮຽນ.

ບັນດາພໍ່ແມ່ແລະຜູ້ດູແລຕ້ອງເຮັດຕາມ ຄຳ ແນະນຳຂອງໂຮງຮຽນຂອງພວກເຂົາກ່ຽວກັບການປ່ຽນແປງຂອງການສົ່ງແລະຮັບນັກຮຽນ. ລວມມີການນັ່ງຢູ່ໃນລົດໃນເວລາສົ່ງແລະຮັບເອົາລູກໆຖ້າມັນປອດໄພທີ່ຈະເຮັດ. ອັນນີ້ບໍ່ໄດ້ໃຊ້ກັບການສົ່ງແລະຮັບຈາກການດູແລນອກຊົ່ວໂມງຂອງໂຮງຮຽນ (Out of School Hours Care (OOSHC)) ຍ້ອນວ່າຕ້ອງມີລະບຽບການເຊັນຊື່ເຂົ້າແລະອອກ.

ບັນດາພໍ່ແມ່ ຕ້ອງ:

- ປະຕິບັດຕາມຄຳແນະນຳການຫ່າງກັນທາງຮ່າງກາຍ ສຳລັບເຂດທ້ອງຖິ່ນຂອງພວກເຂົາແລະຫຼີກລ້ຽງການເຕົ້າໂຮມຢູ່ນອກປະຕູໂຮງຮຽນ
- ໃຫ້ຢູ່ນອກເຂດພື້ນທີ່ຂອງໂຮງຮຽນ - ຂໍ້ຍົກເວັ້ນບາງຢ່າງອາດຈະຖືກນຳມາໃຊ້ກ່ຽວກັບໂຮງຮຽນສຳລັບຈຸດປະສົງສະເພາະ (Schools for Specific Purposes (SSP)), ບັນດານັກຮຽນທີ່ອ່ອນແອ ຫຼື ນັກຮຽນທີ່ມີຄວາມພິການ
- ປະຕິບັດຕາມຂໍ້ກຳນົດກ່ຽວກັບການໃສ່ ໜ້າ ກາກແລະລົງຊື່ເຂົ້າໂດຍໃຊ້ລະຫັດ Service NSW QR code ເມື່ອເຂົ້າໄປໃນໂຮງຮຽນ.

### ນັກຮຽນ HSC

ນັກຮຽນ HSC ຈະໄດ້ຮັບການສະໜັບສະໜູນ ໃຫ້ເຂົ້າຮຽນໃນໂຮງຮຽນເພື່ອເຮັດວຽກຕາມວິຊາຮຽນ, ວຽກໂຄງການແລະການກະກຽມການສອບເສັງເຊິ່ງບໍ່ສາມາດເຮັດໄດ້ຈາກເຮືອນ. ນັກຮຽນທີ່ເຂົ້າຮ່ວມຈະຕ້ອງປະຕິບັດຕາມກົດລະບຽບກ່ຽວກັບຄວາມປອດໄພທີ່ເຄັ່ງຄັດດ້ານCOVID.

## ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມກະລຸນາໂທຫາ ທ່ານຄູໃຫຍ່ໂຮງຮຽນຂອງທ່ານ. ຖ້າທ່ານຕ້ອງການນາຍພາສາຊ່ວຍທ່ານໃນການສອບຖາມຂອງທ່ານ ກະລຸນາໂທຫາ ບໍລິການ ນາຍພາສາທາງໂທລະສັບທີ່ ເລກ 131 450 ແລະຂໍເອົານາຍພາສາເປັນພາສາຂອງທ່ານ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.